**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງ

ເລກທີ 1164/ຫວຂ.ບກ.

ບໍ່ແກ້ວ, ລົງວັນທີ 3.12.2020

# ແຈ້ງການ

- **ຮຽນ:** ບັນດາທ່ານເຈົ້າເມືອງ 5 ເມືອງ, ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ເຈົ້າໜ້າທີ່ດ່ານສາກົນປະຈຳຂົວມິດຕະພາບ 4, ເຈົ້າໜ້າທີ່ດ່ານສາກົນປະຈຳບ້ານມອມ, ສະມາຄົມເຮືອ, ນັກທຸລະກິດ, ຕົວແທນຜູ້ດຳເນີນການແຈ້ງເສຍພາສີ (ຊິບປິງ) ແລະ ຜູ້ປະກອບການຂົນສົ່ງສິນຄ້າຜ່ານແດນ ທີ່ນັບຖື.

**ເລື່ອງ:** ການໂຈະ ກິດຈະການເດີນເຮືອຂົນສົ່ງສິນຄ້າຜ່ານຈຸດດ່ານສາກົນບ້ານມອມ ແລະ ການນຳເຂົ້າ-ສົ່ງອອກສິນຄ້າທຸກປະເພດ.

- **ອີງຕາມ** ສະພາບການລະບາດ ຂອງພະຍາດໂຄວິດ-19 ຢູ່ບັນປະເທດໃກ້ຄຽງ ທີ່ຕິດຊາຍແດນກັບແຂວງບໍ່ແກ້ວ (ແຂວງຊຽງໃໝ່, ຊຽງຮາຍ ຣາຊະອານາຈັກໄທ, ແຂວງທ່າຂີ້ເຫຼັກ ສ.ມຽນມາ) ນັບມື້ເພີ່ມຂຶ້ນ.
- **ອີງຕາມ** ການຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງເຫັນດີເປັນເອກະພາບ ຂອງຄະນະປະຈຳພັກແຂວງ ຄັ້ງວັນທີ 1 ທັນວາ 2020.

ຫ້ອງວ່າການແຂວງບໍ່ແກ້ວ ຂໍຖືເປັນກຽດ ແຈ້ງມາຍັງບັນດາທ່ານ ຊາບວ່າ: ສະຖານະການຢູ່ໃນໂລກ ແລະ ພາກພື້ນ ໃນປະຈຸບັນເວົ້າລວມ, ເວົ້າສະເພາະປະເທດໃກ້ຄຽງ (ແຂວງທ່າຂີ້ເຫຼັກ ສ.ມຽນມາ ແລະ ແຂວງຊຽງໃໝ່, ຊຽງຮາຍ ຣາຊະອານາຈັກໄທ) ໄດ້ມີກໍລະນີຕິດເຊື້ອພະຍາດໂຄວິດ-19 ໃໝ່ ແລະ ນັບມື້ເພີ່ມຂຶ້ນ ຊຶ່ງແຂວງບໍ່ແກ້ວໄດ້ນອນຢູ່ໃນສະຖານະການ ທີ່ມີຄວາມສ່ຽງຕິດເຊື້ອພະຍາດໂຄວິດ-19 ສູງ ຕໍ່ການເຂົ້າ-ອອກ ຂອງພົນລະເມືອງ ນັບທັງຜູ້ລັກລອບເຂົ້າເມືອງບໍ່ຖືກຕ້ອງ ແລະ ຖືກຕ້ອງຕະຫຼອດເຖິງຄົນຂັບເຮືອ ແລະ ກຳມະກອນ; ສະນັ້ນ, ເຮືອບັນທຸກສິນຄ້າ ຈຶ່ງໄດ້ໂຈະການເດີນເຮືອ ແລະ ການ ນຳເຂົ້າ-ສົ່ງອອກສິນຄ້າ ທຸກປະເພດ ຢູ່ຈຸດດ່ານສາກົນບ້ານມອມ, ດ່ານສາກົນສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວຊົ່ວຄາວເລີ່ມແຕ່ວັນທີ 5 ທັນວາ 2020 ເປັນຕົ້ນໄປ ຈົນກວ່າສະຖານະການ ຈະເຂົ້າສູ່ພາວະປົກກະຕິ. ທັງນີ້ກໍ່ເພື່ອຮັບ ປະກັນຊີວິດ, ຊັບສິນຂອງປະຊາຊົນບັນດາເຜົ່າພາຍໃນແຂວງບໍ່ແກ້ວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງແຕ່ລະພາກສ່ວນຮັບຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນດີ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ຫົວໜ້າ-ຫ້ອງວ່າການແຂວງ**

ຫ້ອງວ່າການ ແຂວງ

ບຸນທອງ ແສງສີທອງ

BOUNTHONG SENGSITHONG

+ເບີໂທປະສານ:

084 211 066

020 5598 4858